# ຂໍໂທດນຳສາວຫຼັກເຈັດ

ຂໍໂທດນຳທຸກທ່ານ　　ທີ່ໄດ້ອ່ານບົດຂຽນ
ລຽນຄຳຄົມເປັນກອນ　　ຢ້ອນຢອກສາວທີ່ເຄີຍຮູ້
ສາວເອື້ອຍຄຣູເລີຍຂັດຂ້ອງ　　ຫມອງຫົວໃຈວ່າອ້າຍມິ່ນ
"ສາວຫຼັກເຈັດຫຼົງຖິ່ນ" ນັ້ນພຽງເຢີ້ຍຢອກຫຼິ້ນ　　ເປັນຊິນອ້າຍເຣື່ອງແຕ່ງກອນ

ບໍ່ຄຳນຶງ ວ່າຊິເກີດເດືອດຮ້ອນ　　ຢ້ອນເຄືອງຄ້ຽງໃຈນາງ ອີ່ຫຼີໃດ
ຈຶ່ງຫາທາງມາຂໍ　　ຍົກໂທດໂພຍແດ່ເດີນ້ອງ
ເພື່ອສນອງໃຈເຈົ້າ　　ເຮົາຈົດຫມາຍໄປບອກຂ່າວ
ສົ່ງ ອີເມລ໌ຫາລາວເກົ່າ　　ລາວເອົາໄຟຈູດຖິ້ມ ໃຫ້ລືມເຣື່ອງຜ່ານມາ ແມ່ເດີ

ອ້າຍຂໍໂທດນ້ອງຫຼ້າ　　ທີ່ໄດ້ວ່າເປັນຄຳກອນ
ອ້າຍຂໍຖອນຄຳຄືນ　　ຕື່ນຕົວເອງວ່າຜິດແທ້
ບໍ່ແມ່ນຫາທາງແກ້　　ຍອມຈຳເລີຍ ໃຫ້ນ້ອງດ່າ
ຜິດຕໍ່ສານອາດຍາ　　ຈາກນີ້ໄປຕໍ່ຫນ້າ ບໍ່ຂຽນເຢີ້ຍຢອກໃຜ

ຍ້ອນວ່າ ຄວາມເຄີຍຊິນຂອງອ້າຍ ນິສັຍສິ່ງທາງຂຽນເພງ
ໃຈຄຶ້ນເຄງທາງໃດ　　ຈຶ່ງເລົ່າຂຽນໄປທາງນັ້ນ
ຄຶດຄັນມືຢາກຂຽນເຢີ້ຍ　　ເລີຍຕາມເລີຍຈຶ່ງຂຽນຢອກ
ອອກມາບໍ່ໄດ້ເຣື່ອງ　　ເຄືອງໃຈນ້ອງຈົ່ງອະພັຍ

ຮູ້ຕົວເອງວ່າຂີ້ຮ້າຍ　　ທັງຕ້ອຍຕ່ຳສັກສີ
ສາວຜູ້ດີທັງຫຼາຍ　　ຈຶ່ງໄດ້ໄລຫນີຫນ້າ
ຂໍຂະມານຳນ້ອງ　　ມືຈອງຫອງລອງຂຽນຫມ່າຍ
ຜູ້ນ້ອຍສົມຄວນຕາຍ　　ໃນຫນັງຈີນມັກເວົ້າ ຢ່າເອົາເຣື່ອງອ້າຍອີກເລີຍ

ສິ່ງໃດເຄີຍຢອກເຢີ້ຍ　　ໄດ້ເລີຍລ່ວງທາງເກີນ
ຂໍໃຫ້ເມີນເສີຍລືມ　　ຢ່າຕື່ມເຕັມໃຈໄວ້
ໃຫ້ວ່າເມົາຫຼືບ້າ　　ຢ່າຫົວຊານຳຄວາມຖ່ອຍ ອ້າຍເດີ
ອ້າຍມັນຄົນປຶກຫນາ ແຖມປັນຍາຊ້ຳພັດຫນ້ອຍ ຈຶ່ງພອຍພົ້ງພາດມື

ຕະວັນເອີຍ.. ຂໍໂທດເດີທີ່ອ້າຍໄດ້　　ຖືບັງອາດສົ່ງຄຳກອນ

ອ້າຍຂໍຖອນຄຳຄືນ ທີ່ຍື່ນກອນຫານ້ອງ
ອ້າຍພຽງລອງຂຽນເຫຼັ້ນ ເຫັນຫຼາຍຄົນມັກອ່ານ
ໃຈຄຶດຢາກປະກອບສ່ວນ ທັງມັກມ່ວນກະພ່ອງນັ້ນ ເລີຍຫັນຈ້າວກ່າວກອນ

ໃຫ້ອະພັຍອ້ອຍແນ່ທ້ອນ ຖ້າກ້າວກ່າຍເຖິງບຸກຄົນ
ຢ່າກັງວົນໃຈຕິດ ຄຶດຂຸ່ນເຄືອງໃຫ້ໃຈເສົ້າ
ເອົາສຸພາສິຕໄວ້ ອະພັຍກັນໂລກໃສແຈ່ມ
ມີຮອຍຍິ້ມໃສ່ໜ້າ ຊີວາຊື່ນໂລກແຈ່ມໃສ ຈິງແລ້ວ....